**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 863/ກປຈ
ນະຄອນຫຼວງວຽງຈັນ, ວັນທີ 6 ກໍລະກົດ 2026

## ໜັງສືແຈ້ງເລື່ອນເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະໜອງພາຫະນະ ຈໍານວນ 03 ຄັນ ຊຶ່ງປະກອບມີ: ປະເພດລົດຈິບ TOYOTA LANDCRUISER 250 ເກຍໂອໂຕ້ ຈໍານວນ 01 ຄັນ, ລົດກະບະ TOYOTA TRAVO ຈໍານວນ 1 ຄັນ, ລົດຕູ້ 14 ບ່ອນນັ່ງ ຍີ່ຫໍ້ TOYOTA HIACE ເກຍທໍາມະດາ ຈໍານວນ 01 ຄັນ, ເພື່ອປະກອບເປັນລົດຮັບໃຊ້ວຽກງານບໍລິຫານຂອງອົງການກວດກາແຫ່ງລັດ ກໍານົດເວລາໃນການມອບ-ຮັບລົດແມ່ນພາຍໃນ 30 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 020 55424565, 020 22394585, 58666656 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 04 ມິຖຸນາ 2026 ຫາ 09 ກໍລະກົດ 2026. ໃນລາຄາ 6,000,000 ກີບ/ຄັນ ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 09 ກໍລະກົດ 2026, ຕາມໜັງສືເຊີນປະມູນສະບັບເລກທີ 706/ກປຈ, ລົງວັນທີ 04 ມິຖຸນາ 2026. ເລື່ອນມາເປັນຕ້ອງສົ່ງກ່ອນເວລາ 09:00 ຂອງວັນທີ 10 ກໍລະກົດ 2026. ຊອງປະມູນທຸກໆຊອງຈະໄດ້ເປີດໃນ ວັນທີ 10 ກໍລະກົດ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;
6. ທຸກຊອງປະມູນຕ້ອງມີການຄໍ້າປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກະຊວງການເງິນ
ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ສົມບູນ ແກ່ນປະເສີດ
Somboun KENPASEUTH

扫描全能王 创建